ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມຄັ້ງທີ II ຂອງຄະນະຮັບຜິດຊອບກະກຽມເປັນເຈົ້າພາບ ແລະ ປະທານອາຊຽນ ແລະ ອາຊຽນ+3 ປີ 2024 ລະຫວ່າງ ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ



ໃນຕອນເຊົ້າຂອງວັນທີ 14 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ 7 ຂອງທະນາຄານແຫ່ງ ສປປ ລາວ (ທຫລ), ໄດ້ຈັດຕັ້ງກອງປະຊຸມຄັ້ງທີ II ຂອງຄະນະຮັບຜິດຊອບກະກຽມເປັນເຈົ້າພາບ ແລະ ປະທານອາຊຽນ ແລະ ອາຊຽນ+3 ປີ 2024 ໂດຍການເປັນປະທານຮ່ວມລະຫວ່າງ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ແລະ ທ່ານ ພູທະນູເຜີດ ໄຊສົມບັດ ຮອງລັດຖະມົນຕີກະຊວງການເງິນ (ກງ), ພ້ອມທັງຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການຈາກພາຍໃນ ທຫລ ແລະ ຈາກກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງອຸດສາຫະກໍາແລະການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ແລະ ກະຊວງສາທາລະນະສຸກເຂົ້າຮ່ວມ.

ກອງປະຊຸມແມ່ນໄດ້ປຶກສາຫາລືຄວາມເປັນເອກະພາບຮ່ວມກັນຂອງ 06 ອານຸກໍາມະການ ລະຫວ່າງ ກງ ກັບ ທຫລທີ່ຖືກແຕ່ງຕັ້ງຕາມຂໍ້ຕົກລົງສະບັບເລກທີ 5935/ຕປທ, ລົງວັນທີ 11 ຕຸລາ 2023 ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຂອງແຕ່ລະອານຸກໍາມະການໃຫ້ປະຕິບັດແຜນວຽກເປັນອັນລວມສູນ ແລະ ກົມກຽວກັນລະຫວ່າງຂະແໜງການທີ່ໄດ້ຕົກລົງເຫັນດີເປັນເອກະພາບກັນ, ໃນດ້ານວັນເວລາ ແລະ ສະຖານທີ່ກອງປະຊຸມດັ່ງກ່າວໄດ້ມອບໝາຍໃຫ້ອານຸກໍາມະການກ່ຽວຂ້ອງຂອງ 02 ຂະແໜງການເຮັດວຽກຮ່ວມກັນເພື່ອກະກຽມລາຍງານແຜນວຽກຄືບໜ້າໃຫ້ການນໍາຂອງ 02 ຂະແໜງການຊາບອີກຄັ້ງໃນເດືອນ ທັນວາ ປີ 2023.



ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນດ້ວຍບັນຍາກາດອັນຟົດຟື້ນໃນການແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນ, ເຮັດໃຫ້ກອງປະຊຸມປິດລົງດ້ວຍໝາກຜົນຕາມລະດັບຄາດໝາຍທີ່ວາງໄວ້.

**# ຂ່າວ ແລະ  ພາບ : ແຂກ ມູນລະໄນ**

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*